ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 08 ຫາ 12 ເມສາ 2024




ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະລົງຊຸກຍູ້ການຜະລິດ
ລະດູແລ້ງທີ່ແຂວງ ເຊກອງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ທ່ານລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະລົງຊຸກຍູ້ການຜະລິດລະດູແລ້ງ ທີ່ແຂວງ ເຊກອງ



ໃນວັນທີ 3 ເມສາ 2024 ທີ່ຜ່ານມານີ້ ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຮອງຫົວໜ້າຫ້ອງການ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານວິຊາການລົງຊຸກຍູ້, ຕິດຕາມການຜະລິດລະແລ້ງຢູ່ທີ່ແຂວງ ເຊກອງ ໃນໂອກາດນີ້ກໍໄດ້ເຂົ້າພົບ ທ່ານ ເຫຼັກໄຫຼ ສີປະເສີດ ເຈົ້າແຂວງ ແຂວງ ເຊກອງ ຢູ່ທີ່ຫ້ອງວ່າການປົກຄອງແຂວງ ເຊກອງ ເພື່ອລາຍງານຈຸດປະສົງໃນການລົງມາເຄື່ອນໄຫວວຽກໃນຄັ້ງນີ້ ພ້ອມທັງປຶກສາຫາລື ການຊຸກຍູ້ສົ່ງເສີມການຜະລິດກະສິກຳ ເພື່ອຄ້ຳປະກັນທາງດ້ານສະບຽງອາຫານ, ການຜະລິດເປັນສິນຄ້າ, ວຽກງານການລ້ຽງສັດ ແລະ ການປະມົງ, ການສັກຢາປ້ອງກັນພະຍາດ ແລະ ການເຝົ້າລະວັງຕິດຕາມພະຍາດໄຂ້ເລືອດດຳທີ່ກຳລັງລະບາດຢູ່ ເພື່ອຊອກຫາວິທີການປ້ອງກັນ ແລະ ສະກັດກັ້ນບໍ່ໃຫ້ລະບາດເປັນວົງກວ້າງ, ວຽກງານປົກປັກຮັກສາປ່າໄມ້, ການບຸກລຸກປ່າໄມ້, ການຖາງປ່າເຮັດໄຮ່, ເຮັດສວນມັນຕົ້ນ ແລະ ອື່ນໆ.

ເວລາຕໍ່ມາ ທ່ານລັດຖະມົນຕີພ້ອມດ້ວຍຄະນະ ໄດ້ພົບປະໂອ້ລົມພະນັກງານລັດຖະກອນຂະແໜງການກະສິກຳ ແລະ ປ່າໄມ້ ໂອກາດນີ້ກໍໄດ້ຮັບຟັງລາຍງານຈາກທ່ານ ເສີມສີ ສຸລິຕະ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ ເຊກອງ ຢູ່ທີ່ສະໂມສອນສະພາແຂວງ ໃຫ້ຮູ້ວ່າ: ແຜນງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ການຜະລິດເຂົ້າທົ່ວແຂວງ ມີເນື້ອທີ່ນາທັງໝົດ 11 ພັນກວ່າເຮັກຕາ, ສະມັດຕະພາບ 4,7 ໂຕນ/ຮຕ ຜົນຜະລິດສະເລຍ 45 ພັນກວ່າໂຕນ, ເນື້ອທີ່ນາແຊງທັງໝົດ 835 ເຮັກຕາ ສະມັດຕະພາບ 3.2 ໂຕນ/ຮຕ ຄາດຄະເນຜົນຜະລິດ 9 ພັນກວ່າໂຕນ, ການຜະລິດພືດສະບຽງອາຫານ ປະຕິບັດໄດ້ 5 ພັນກວ່າເຮັກຕາ ສະມັດຕະພາບຜົນຜະລິດ 8,5 ໂຕນ/ຮຕ

ຜົນຜະລິດໄດ້ 44 ພັນກວ່າໂຕນ, ການລ້ຽງສັດ ແລະ ການປະມົງ ມີການຂະຫຍາຍຕົວ 2-3% ທົ່ວແຂວງ ມີຄວາຍ 25 ພັນກວ່າໂຕ, ງົວ 36 ພັນກວ່າໂຕ ແບ້ 17 ພັນກວ່າໂຕ, ສັດປີກ 9 ແສນກວ່າໂຕ, ວຽກງານປ່າໄມ້ ແລະ ຟື້ນຟູປ່າ ສາມາດເກັບແກ່ນພັນໄມ້ໄດ້ 629 ກິໂລ ຜະລິດເບ້ຍໄມ້ໄດ້ 4 ແສນກວ່າເບ້ຍ, ປູກໄມ້ 660 ເຮັກຕາ, ກຳນົດເຂດຟື້ນຟູປ່າໄມ້ແບບທຳມະຊາດ 6 ຮ້ອຍກວ່າເຮັກຕາ, ຂຶ້ນທະບຽນປ່າປູກ ໄດ້ 5 ພັນກວ່າເຮັກຕາ, ການຜະລິດກະສິກຳເປັນສິນຄ້າ ແຂວງກໍ່ໄດ້ສຸມໃສ່ປູກພືດໄລຍະສັ້ນ ແລະ ໄລຍະຍາວ ອັນພົ້ນເດັ່ນແມ່ນການປູກກາເຟ, ໝາກແໜ່ງ, ມັນຕົ້ນ, ສາລີ, ກ້ວຍ, ໂສມ ແລະ ຜັກກະລໍ່າປີ ເພື່ອພໍລິໂພກພາຍໃນ, ສົ່ງອອກຕ່າງແຂວງ ແລະ ຕ່າງປະເທດ.

ໃນຕອນທ້າຍ ທ່ານ ປອ ເພັດ ພົມພິພັກ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ໃຫ້ກຽດເນັ້ນໜັກໃຫ້ຄະນະນຳພະແນກ, ບັນດາຂະແໜງການ ຈົ່ງສືບຕໍ່ເອົາໃຈໃສ່ຜັນຂະຫຍາຍມະຕິກອງປະໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ 11 ຂອງພັກ ໃຫ້ປະກົດຜົນເປັນຈິງ. ໂດຍປະຕິບັດຕາມ 3 ເສົາຄ້ຳ ແລະ 4 ແຜນງານຂອງກະຊວງກະສິກຳ ແລະ ປ່າໄມ້ວາງອອກ, ຫັນເອົາພະນັກງານລົງຊຸກຍູ້ຕິດຕາມຢູ່ບັນດາສູນ, ສະຖານີ, ກຸ່ມບ້ານໃຫ້ຫຼາຍຂຶ້ນ ເພື່ອນຳພາຊາວກະສິກອນຈັດຕັ້ງປະຕິບັດໃຫ້ໄດ້ຮັບເປັນຢ່າງດີ, ຈັດຝຶກອົບຮົມທາງດ້ານເຕັກນິກ, ວິຊາການ-ການປູກ, ການລ້ຽງ, ສ້າງເປັນຄອບຄົວຕົວແບບໃຫ້ຫຼາຍຂຶ້ນ, ຫັນເອົາການຜະລິດແບບເດີມໃຫ້ທັນສະໃໝ່ຂຶ້ນ, ຍົກສູງທາງດ້ານສະມັດຕະພາບ ແລະ ຜົນຜະລິດໃຫ້ໄດ້ຫຼາຍຂຶ້ນ, ສົ່ງເສີມການປຸງແຕ່ງເພື່ອເພີ່ມມູນຄ້າ ເປັນການສ້າງອາຊີບ, ສ້າງລາຍຮັບໝັ້ນຄົງ ປະຊາຊົນສາມາດຫຼຸດຜົນອອກຈາກຄວາມທຸກຍາກໄດ້ເທື່ອລະກ້າວ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;